CESAD – The Participatory Tool for Community Ecosystem Service Assessment and Dialogue in National Protected Areas

The Tool for Knowledge Co-Generation

Arne Jensen， Finn Danielsen, Martin Enghoff

Daovorn Thongphanh, Sithong Thongmanivong, Houmphan Phoumpanya

April 2016

PREFACE

CESAD is the participatory tool for **C**ommunity **E**cosystem **S**ervice **A**ssessment and **D**ialogue in National Protected Areas. CESAD can help ecosystem managers (of protected areas, agriculture, forestry, wetlands and land management authorities) to involve local stakeholders in the generation of knowledge about land and natural resource use. The tool involves discussions with different community groups about the eco-system challenges and opportunities they face and serves to bring this important, rapidly changing but under-represented perspective into decision-making.

The tool was developed due to demand expressed in 2013 by authorities of Nam Et-Phou Louey National Protected Area (NPA) for improved social understanding of communities living adjacent to protected areas and for a means to enhance dialogue with them. CESAD was developed, piloted and refined in 2014 and 2015 by the Nordic Agency for Development and Ecology (NORDECO), Copenhagen in collaboration with the Research Division & Research Center for Natural Resources & Climate Change, Faculty of Forestry of the National University of Laos and the park management of the Nam Et-Phou Louey NPA as part of a project funded by the Ecosystem Services and Poverty Alleviation (ESPA) program of the United Kingdom.

CESAD consists of several focus group discussions involving different groups of community members within a village, including women and poor groups. Use of the tool may be prioritized in villages known to have particular issues regarding ecosystem services, e.g. impacted by and impacting on the landscape and natural resources. The tool is intended to be repeated regularly (6 months to one year) depending on the situation and may serve to support and feed into less frequent participatory land-use planning. CESAD details the steps to be taken in organizing and conducting the focus group discussions. However, it also pays attention to preparation for the work, the importance of understanding and trust with participants in supporting useful discussions, and to the means of recording and reporting the results so that they can be incorporated into management decisions.

Information derived out of CESAD can be used by technical staff and the managers from government agencies with jurisdiction over a NPA and by the local community. It can in particular provide practical guidance for newly appointed staff with limited or no experience working with local communities. It is also applicable for the use by national or international NGOs assisting authorities with technical assistance or operating under co-management schemes.

The CESAD tool has several advantages compared to conventional approaches for land and resources. It encourages protected area managers and staff to not only communicate with village heads but also to various land and resource users. It promotes a more holistic focus beyond mainstream conservation approaches to consider many other types of ecosystem services and dis-services. It does so by increasing opportunities for dialogue between staff and managers of local authorities and villagers affected by the presence of a National Protected Area.

The enhanced communication and participation may help progress towards international standards and safeguards associated with protected area management such as Aichi Targets of the Convention on Biological Diversity or REDD+ social safeguards. Finally, it opens-up possibilities for adaptive and responsive management which considers a range of potential solutions to conservation and development problems.

The CESAD Tool for Knowledge Co-Generation

CESAD - The Participatory Tool for Community Ecosystem Service Assessment and Dialogue in National Protected Areas

Introduction

The CESAD tool focuses on assessing the ecosystem services and dis-services in terms of 'provisioning services' (the products obtained from ecosystems such as access to and use of land, water and other resources), 'regulating services' (benefits obtained from the ecosystem processes, such as the regulation of climate and water) and benefits linked to cultural knowledge and values, including material benefits as well as non-material spiritual, aesthetic and recreational values

The CESAD is intended to be used by communities and authorities in and around National Protected Areas (NPA). The tool will help ecosystem managers such as NPA authorities, Agriculture, Forestry and Land Management authorities to involve local stakeholders in the generation of knowledge about land and natural resource uses, challenges and opportunities (ecosystem services) and will serve communities in providing their view on ecosystem services. The tool promotes the involvement of local people, particularly people of different socio-economic status, gender, and ethnicity who are dependent on access to land-uses and resources adjacent to or within the NPA, in a joint generation of knowledge about ecosystem services and identification of trade-offs encountered in ecosystem management and management decisions.

The tool uses Focus Group Discussions (FGD) involving different groups of community members, including women, in a selected number of villages known to have particular issues regarding ecosystem services, e.g. impacted by and impacting on the landscapes and natural resources and situated within or near the NPA. The discussions aim at quickly establishing partnerships, dialogue and information-sharing between NPA village communities and NPA managers on key critical information about access to land and availability and use of resources (e.g. minor forest products, wildlife) and other eco-system services such as water from the community members. At the same time it encourages local decision-making and solutions to solve key challenges in land uses and natural resource management. This can also help to mediate the impacts of sudden or rapid changes on land use, including introduction of cash crops through national or foreign companies.

The tool is intended to be repeated regularly depending on the situation or may feed into less frequent participatory land-use processes (PLUP), mainly by identifying opportunities to establish land and resource use and conservation co-management, to stabilize forest and land use patterns under sustainable management responsibilities of villagers and to explore options for equitable incentives for villagers to assist in sustainable management and monitoring of NPAs.

WHY?

Why should community members and local authorities want to spend time on using the CESAD tool? The tool will produce the observations, knowledge and perceptions of the village community members with regard to the material and non-material benefits (services) and challenges (disservices) they derive from the ecosystems.

The CESAD tool further increases the opportunities for knowledge-based dialogues on use and protection that may increase community involvement in forest, land and wetland management and serve as an appropriate format useful for the overall NPA management and decision-making.

The tool aims to institutionalize NPA authorities' regular meetings and dialogue with community members. This can generate very important information regarding land use and natural resource management challenges and realities. The information is mainly based on local communities' own perception of challenges and opportunities related to eco-system services. It therefore aims to bring forward local values and integrate them into ecosystem management.

Data gathered from a number of representative village communities and from different interest groups in the villages can provide a significant and valid picture of general key challenges and status of land and natural resources. Hence, this tool may provide an understanding of some of the dynamics in terms of land and resource use occurring from the perspective of villagers. For instance, changes in harvest volume per effort can indicate trends in abundance of resources. It can provide an early warning of over-harvesting situations, which would threaten both biodiversity conservation effort and local communities' opportunities for sustained resource-use.

The use of the tool particularly encourages a constructive dialogue between the NPA authorities and the local communities on the challenges in terms of land uses and natural resource management in the local area. The NPA communities will be directly involved in discussing land and resource management. Consequently, the communities will become more aware of the need for NPA conservation and the authorities more aware of the realities facing the communities. It is further anticipated that the communities involved agree on, and contribute to sustainability in the management of the NPA and in the regulation of land and resource uses.

SUITABILITY

The CESAD tool is useful both in forested land and wetland areas, where it can be used to assess the status and monitor ecosystem services of these different landscapes.

WHO?

The tool can in particular provide practical guidance for newly appointed staff with limited or no experience working with local communities. Who is going to use the information produced with the tool? The information will be used by technical staff and the managers from government agencies with jurisdiction over NPA and by local community authorities including community organizations and associations at the village or district levels. The tool is also applicable for the use by national or international NGOs assisting NPA authorities with technical assistance or operating under co-management schemes.

EQUIPMENT

The following basic tools are needed: large sheets of paper, markers, camera (to eventually document key land use and resource use challenges and opportunities).

PERSONNEL

Who is going to undertake the work involved in application of the CESAD tool? Village visits and conduct of FGDs are among the most sensitive of management activities. The activity should be conducted by NPA staff or those working in support of NPA management who are trained to facilitate participatory community exercises, and who have a trusted and good working relationship with people in the villages adjacent to the NPA. The preferred NPA staff or those working in support of NPA management are those with local knowledge on advantages and disadvantages related to the NPA and the ecosystem services in the area. If the tool is undertaken by NPA staff, it should only be by those who are not involved in enforcement activities in the same area (so as to encourage and increase an open discussion with the community members).

Two persons are needed, one to facilitate discussions and re-echo the conclusions with the FGD community members, and one person to record the minutes summarized by the facilitator, and to conduct photo-documentation, where applicable.

TIME SPEND

A CESAD meeting will normally take about three hours. It is best conducted in the morning but the scheduling must be decided the community members to ensure that the discussion does not impact negatively on their scheduled livelihood works.

LOCATION OF CESAD MEETING

A FGD meeting should ideally be conducted in most villages within and adjacent to the NPA. with focus on:

- Communities living near areas of high conservation value;
- Communities with a relatively high dependence on forest or wetland products and lands for their livelihood and subsistence. The more dependent they are, the more chance there is of people having valuable information on the land use and natural resources as well as a high interest in finding solutions to sustain or obtain user rights;
- Communities thought to over-harvest areas and resources/species of high conservation value; and
- Communities living in areas known to be the entry/exit points of resources.

In each village, there would be several focus groups (normally three different) so as to get both gender-aspects, different types of livelihood uses and socio-economic status in the village represented. Each of the FGDs should primarily consist of people representing the same socio-economic status within the local society. The FGD most take place at a comfortable and undisturbed location, acceptable to all the participants.

STEPS IN ESTABLISHING FOCUS GROUP DISCUSSIONS

1 Be familiar with the village where the CESAD will be conducted. Meet then with the village head and other relevant community leaders, such as the heads of women and farming associations to explain the objectives and activities of the CESAD. Stress the

common interest of NPA staff and local people in conservation and in a more sustained use of lands and natural resources based on the results and data that the FGDs may provide.

2 Assisted by the head of the village and the relevant village associations, identify 8-10 community members among households per FGD group (seek to get one group with members who has access to lands, one group without access to lands, and one group composed solely by women). Ensure that the members are utilizing the NPA lands and natural resources (including, for example, minor forest product gatherers, farmers, farm workers, forest guards, community forestry committee members, etc.).

3 As a standard there should be three different FGD groups per village, see Step 2. The group members most represent major forest or wetlands product users and the major land uses of the village (e.g. agriculture). They should be interested in discussing services and disservices related to the ecosystem of which the NPA forms a part. Ensure that different age groups are represented.

4 Ensure that NPA staff or staff supporting NPA management are responsible for conducting the CESAD discussion meeting with the different FGD groups in each of the selected villages. Note that facilitation must be strictly neutral and the facilitator most ensure that all members are actively included in order to have an open and representative discussion. Note that what may be an incentive for one group may be a dis-incentive of eco-system services for another group (e.g. forest/wetlands product gatherers may wish to maintain the original ecosystem while agriculturalist may wish to convert some of these ecosystems). See the text below on steps in conducting a FGD discussion.

5 Give prior notice to the village head regarding the group discussions (at least one week) to allow all participants to attend. Arrange the program and a venue for the discussions in collaboration with the village head or the heads of the associations present in the villages. Make sure that the time set for the meeting is the most convenient for the participants. For instance, the meeting could either be held early morning before work activities start or be held in the evening when work or household activities are completed.

STEPS IN CONDUCTING FOCUS GROUP DISCUSSION

CESAD FGDs can be an on/off exercise or it can be part of a continuing platform.

1 Decide with who and how you want to conduct the FGD (who will participate, proposed agenda, etc.)?

2 Make sure that the objective of the meeting is formulated (e.g. to discuss challenges and opportunities regarding products obtained from ecosystems, such as access to and use of land, water and other resources (provisioning services), benefits obtained from the ecosystem processes, such as the regulation of climate and water supplies, prevention of erosion and flooding (regulating services) and benefits linked to cultural knowledge and values, including material benefits as well as non-material spiritual, aesthetic and recreational values (cultural services).

3

4 Start the meeting by agreeing on the time duration (normally about three hours could be sufficient). Use possible waiting time before all participants arrive for informal discussions and interactions but avoid biased conservation messages and show a strong interest in the communities' observations and knowledge.

5 Guide the FGD members, that the discussion may include what the group feel are the most important aspect of eco-system services and disservices. Then let the FGD group identify the most important land, resources and species use challenges and opportunities to be discussed. Cluster and list the challenges and opportunities accordingly to these uses.

6 Go through the clustered challenges and opportunities one by one:

   a. What are the three most important challenges and opportunities pertaining to a) land-uses, b) natural resource uses and c) other ecosystem services such as water or soil retention and erosion. Ensure that actual management related to these different types of eco-system services also is discussed.
   b. What are the extent, scale and location of each challenge? - and what are the opportunities to address the challenges?
   c. How is this impacting differently on different groups in the community?
   d. What are the possible solutions to mitigate the challenges within the context of the need for conservation in the NPA?
   e. Agree on what possible actions may be taken by the villagers, by the NPA manager and by the relevant local government authorities.

7 Summarize the initial findings at the end of each FGD discussion and ask for the group's consent and comments. Evaluate the session and re-echo the conclusions with the FGD group participants.

8 Inform the participants what happens next in terms of communication and decision-making within the NBCA institutions(s), and what and when feedback are provided to the villagers.

9 Draw the meeting to a close with an expressed gratitude to continue dialogues on increased conservation and sustainable use of the NPA.

TIPS

1 Ensure that the discussion is a dialogue among the focus group discussion participants. The facilitator should encourage everyone among the participants to express themselves and to participate in the discussion. As facilitator, limit your own inputs and do not give opinions or prompt on the issues to discuss, but focus on encouraging discussion and all the participants' involvement. Make sure that direct land and resource users are given priority as members of the FGD group. Try to establish and maintain an atmosphere of trust. Focus on fruitful co-operation with people (not laying down the law) and on listening to people (not teaching them).

2 There is often a tendency for people to talk very generally about resource issues. Therefore encourage some specificity by asking 'where, what and who questions' to ensure that topics are discussed in enough detail to lead to information useful for management.

3 Do not use leading questions ("Is the river water drinkable?") but use open-ended questions ("How is the river water?"). Let the group make their own conclusions of the discussions.

4 If a resource use plan or a development plan/zoning scheme is available for the village, know it and include in the discussion of the relevant areas of overlap between the plan and the discussion. Try to make the discussion location-specific.

5 Share the outcomes of the FGD discussions with the village/local organisation head and inform her/him on the next planned steps.

DATA ORGANIZATION, ANALYSIS AND INTERPRETATION

DATA ORGANIZATION

1 Shortly after the FGD, look over the data results and cluster them accordingly to the challenges and opportunities raised, e.g. land-uses, natural resource uses and key biodiversity conservation challenges and opportunities.

2 Draw up a short report within a week after each FGD. The report should comprise:

   a. Main challenges and opportunities discussed cluster into the themes;
   b. A narrative description of the discussion of problems and solutions related to key land and resource uses.

ANALYSIS AND INTERPRETATION

3 As part of the reporting undertake further analysis and interpretation. Do the findings correspond to expectations? Compare the results of the FGD per village group within the village to identify similarities and eventual specific issues corresponding to the composition of the groups (gender, livelihoods etc.). Have the FGD groups in the village raised the same issues or are they specific for each group? How does the FDG information compare between villages? How does location of FDGs impact on information?

4 Are there indications of single situations or consistent land or resource use problems that need to be discussed with the NPA managers/ local government authorities and solutions communicated back to villagers at follow-up meeting?

5 Are there any issues that are so serious they need immediate attention by the NPA management (such as land or resource uses conducted indicating large-scale logging/clearing of lands or hunting or gathering of wildlife for export trade by outsiders)?

PRESENTATION OF RESULTS

It is important to inform the local management of the NPA about the results of the Focus Group Discussions so that he/she can decide on appropriate actions in response to the main issues identified by the villagers. Or where decisions on mitigating actions cannot be taken at local NPA level, be brought to the attention of the authorities at district or higher national.

Similarly important is the feedback to the villagers that took part of the FGD exercise and the village head about what were the issues discussed with the NPA management and their proposed actions to improve land-use and resource use issues raised by the villagers.

PRESENTATION OF RESULTS

The presenter should be person appointed by the head of the NPA where the village is located. The person could be a national park staff, trained in the conduct of Focus Group Discussion techniques and already assigned to the conduct of communication between the villages and the NPA authorities.

SCHEDULE THE PRESENTATION

Presentations to the NPA management should follow normal management meeting schedules and can be an on/off exercise or it can be part of a continuing platform. Ensure enough time to analyze the FGD key results with a focus on the main issues raised concerned land-sues and resource-uses. Begin the preparations at least a week before the meeting.

MAKING THE PRESENTATION

1 Make the presentation in a way that ensures the active participation of the management. The best presentation would lead to the questions and discussions, and practical decision-making. Therefore, have suggested solutions and recommendations to the issues raised and suggested by the villagers ready and included in the presentation.

2 Include in the presentation, bullet-points of the key issues and possible recommendations, and maps and photos to visualize the issues. Make sure that everyone can see, read and hear what is being presented.

3 If the presentation lasts more than 30 minutes, include a short break of five minutes. Otherwise the management may lose concentration and risk to forget much of what you present.

4 Conduct the presentation slowly. Repeat the most important results to ensure management understand the points and suggestions the villagers were raising.

WHAT'S NEW?

The CESAD tool has advantages compared to conventional approaches for land and resource inventories. The tool:

- ✓ Encourages NPA managers and staff to not only communicate with village heads but also to various direct land and resource users in each village;
- ✓ Promotes a more 'holistic' focus 'beyond traditional conservation approaches on many other types of ecosystem services and disservices;
- ✓ Increases opportunities for dialogue between NPA staff and managers and villagers impacting and impacted by the NPA.
- ✓ Facilitates possible 'softening up' approaches of user restrictions within the national legal opportunities in the NPAs; Promotes social safeguards in form of increased village participation in NBCA management.

ຄູ່ມືປະເມີນ
ການໃຫ້ບໍລິການລະບົບນິເວດແບບມີສ່ວນຮ່ວມ
ກັບປະຊາຊົນທ້ອງຖິ່ນ

ຄູ່ມືສຳລັບການສ້າງຄວາມຮູ້ແລະການປະສານງານໃຫ້ດີຂຶ້ນ

Arne Jensen, Martin Enghoff, Finn Danielsen

ດາວອອນ ທອງພັນ, ສີທອງ ທອງມະນີວົງ, ທຸມພັນ ພູມປັນຍາ

ເມສາ 2016

ຄຳນຳ

ເອກສານສະບັບນີ້, ອາດຈະຖືກນຳໃຊ້ເພື່ອເປັນຄູ່ມື ໃຫ້ແກ່ການເຮັດວຽກຮ່ວມກັບປະຊາຊົນ ເພື່ອປະເມີນການໃຫ້ບໍລິການຂອງລະບົບນິເວດທຳມະຊາດທີ່ມີຕໍ່ສັງຄົມ ຫລື ຊຸມຊົນຊຸມຊົນທີ່ອາໄສຢູ່ໃນເຂດທີ່ມີການປົກປັກຮັກສັບພະຍາກອນທຳມະຊາດ ໂດຍສະເພາະແມ່ນໃນເຂດປ່າສະຫງວນ. ນອກຈາກນັກວິຊາການທີ່ເຮັດວຽກັບປ່າສະຫງວນ ແລ້ວ ວິຊາການຂະແໜງການອື່ນໆ ເຊັ່ນ, ກະສິກຳ, ປ່າໄມ້, ທີ່ດິນ ກໍ່ສາມາດນຳໃຊ້ຄູ່ມືດັ່ງກ່າວ ເພື່ອປະເມີນຫລືວິເຄາະບັນຫາຕ່າງໆທີ່ເກີດຂຶ້ນໃນສັງຄົມທ້ອງຖິ່ນ ຊຶ່ງມັນຈະຊ່ວຍເຮັດໃຫ້ພວກເຮົາສາມາດຮຽນຮູ້ແລະເຂົ້າໃຈບັນຫາຕ່າງໆໄດ້ຢ່າງມີເຫດມີຜົນ ເຮັດໃຫ້ພວກເຮົາສາມາດແລກປ່ຽນບົດຮຽນແລະເກັບກຳສະພາບບັນຫາ ທີ່ກ່ຽວຂ້ອງກັບການການນຳໃຊ້ຊັບພະຍາກອນ ແລະ ທີ່ດິນຂອງປະຊາຊົນ. ຄູ່ມືສະບັບນີ້ ຈະຊ່ວຍເຮັດໃຫ້ເຮົາສາມາດກຳນົດໄດ້ຂັ້ນຕອນຂອງການເຮັດວຽກ ເຮັດໃຫ້ເຮົາສາມາດແລກປ່ຽນຄຳຄິດເຫັນກັບຊຸມຊົນໄດ້ດີຂຶ້ນ ແລະ ສຸດທ້າຍກໍ່ຈະນຳໄປສູ່ໃນການຕັດສິນໃຈຮ່ວມກັນໄດ້ ຢ່າງມີເຫດມີຜົນ ແລະ ຄວາມແທດເໝາະກັບສະພາບເງື່ອນໄຂຕົວຈິງ.

ການພັດທະນາຄູ່ມືນີ້ ສືບເນື່ອງມາຈາກຄວາມຮຽກຮ້ອງຕ້ອງການຂອງອົງການຈັດຕັ້ງທີ່ເຄື່ອນໄຫວວຽກງານ ດ້ານການປົກປັກຮັກສາທຳມະຊາດ ໂດຍສະເພາະແມ່ນຫນ່ວຍງານທີ່ເຄື່ອນ ໄຫວວຽກງານຢູ່ເຂດປ່າສະຫງວນແຫ່ງຊາດ ນ້ຳແອດ ພູເລີຍ ຊຶ່ງໄດ້ດຳເນີນງານກັບຊຸມຊົນທ້ອງຖິ່ນ ໃນຊ່ວງ ປີ 2013 ໂດຍມີຄວາມຕ້ອງການ ຢາກມີຄວາມເຂົ້າໃຈເລິກຕໍ່ສັງຄົມທ້ອງຖິ່ນທີ່ດຳລົງຊີວິດ ຢູ່ອ້ອມຂ້າງປ່າສະຫງວນດັ່ງກ່າວ. ພວກເຮົາໄດ້ສ້າງຄູ່ມືນີ້ຂຶ້ນ ໂດຍໄດ້ດຳເນີນການທົດລອງນຳໃຊ້ຢູ່ພາກສະໜາມ ໃນປີ 2014 ແລະໄດ້ດັດແກ້ປັບປຸງ ໃນປີ 2015 ດ້ວຍການຮ່ວມມືກັນ ລະຫວ່າງ ອົງການ NORDECO ປະເທດເດນມາກ, ພະແນກຄົ້ນຄວ້າ ຂອງຄະນະວິທະຍາສາດປ່າໄມ້ (ມະຫາວິທະຍາໄລແຫ່ງຊາດ) ແລະ ໜ່ວຍງານຄຸ້ມຄອງປ່າສະຫງວນແຫ່ງຊາດ ນ້ຳແອດ ພູເລີຍ ຊຶ່ງໄດ້ຮັບການສະໜັບສະໜູນ ຈາກ ESPA, ປະເທດອັງກິດ.

ຄູ່ມືນີ້ ສາມາດນຳໄປໃຊ້ເພື່ອສົນທະນາກັບກຸ່ມຕ່າງໆທີ່ມີຢູ່ໃນສັງຄົມ ຂອງບ້ານ ເຊິ່ງໃນນັ້ນລວມທັງກຸ່ມແມ່ຍິງ ແລະ ກຸ່ມຜູ້ທຸກຍາກ. ການນຳໃຊ້ຄູ່ມືນີ້ ຈະຊ່ວຍໃຫ້ຜູ້ນຳໃຊ້ສາມາດກຳນົດ ໄດ້ບຸລິມະສິດ ຄວາມຕ້ອງການຂອງບ້ານກ່ຽວກັບປະເດັນຕ່າງໆ ໂດຍຜູ້ນຳໃຊ້ຈະຕ້ອງໄດ້ກຳນົດປະເດັນທີ່ຈະຍົກຂຶ້ນມາສົນທະນາກັບປະຊາຊົນ ເຊັ່ນ: ຜົນກະທົບຈາກການຈັດຕັ້ງປະຕິບັດແຜນຈັດສັນຊັບພະຍາກອນ ແລະ ການຈັດສັນທີ່ດິນ ຫລື ອື່ນໆ... ຄູ່ມືນີ້ມີຄວາມຕັ້ງໃຈ ເພື່ອໃຫ້ມີການດຳເນີນການຢ່າງເປັນປົກກະຕິ (ທຸກໆ 6 ເດືອນ ຫາ 1 ປີ) ແລ້ວແຕ່ສະພາບເງື່ອນໄຂຕົວຈິງ ແລະ ຖ້າມີການນຳໃຊ້ຄູ່ມືດ້ວຍວິທີການແບບນີ້ ຄາດວ່າຈະຊ່ວຍເຮັດໃຫ້ຫລຸດຜ່ອນຄວາມຖີ່ ການທົບທວນຄືນແຜນການນຳໃຊ້ທີ່ດິນ ຂອງຊຸມຊົນນັ້ນລົງ ໄດ້ດີພໍສົມຄວນ.

ຄູ່ມື ໄດ້ຈັດວາງລາຍລະອຽດຂັ້ນຕອນການເຮັດວຽກ ໄວ້ຢ່າງເປັນລະບົບເພື່ອໃຫ້ສາມາດຈັດຕັ້ງ ແລະ ດຳເນີນການສົນທະນາກັບກຸ່ມຕ່າງໆໃຫ້ໄດ້ດີ ຊຶ່ງມັນໄດ້ຍົກເນັ້ນໃຫ້ຄວາມສຳຄັນຂອງການກະກຽມວຽກທີ່ຈະເຮັດ ແລະ ຄວາມສຳຄັນຂອງປະເດັນບັນຫາຕ່າງໆທີ່ຢາກທຳຄວາມເຂົ້າໃຈ; ການສ້າງຄວາມໄວ້ເນື້ອເຊື່ອໃຈຂອງຜູ້ເຂົ້າຮ່ວມສົນທະນາ ລວມທັງການບັນທຶກຈົດກ່າຍ ແລະ ການລາຍງານຜົນຂອງການສົນທະນາຢ່າງທ່ຽງທຳແລະກົງໄປກົງມາ ເຊິ່ງສຸດທ້າຍກໍ່ຈະນຳໄປສູ່ການຕັດສິນໃຈໃຫ້ແກ່ການຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ.

ຄູ່ມືນີ້ ສາມາດນຳໄປໃຊ້ໄດ້ດ້ວຍ ປະຊາຊົນ ພະນັກງານຫລືວິຊາການຂອງລັດໂດຍສະເພາະແມ່ນວິຊາການຫນຸ່ມນ້ອຍ ຫລື ຜູ້ທີ່ບໍ່ເຄີຍເຮັດວຽກກັບຊຸມຊົນມາກ່ອນ, ອົງການຈັດຕັ້ງທີ່ບໍ່ສັງກັດໃນອົງການຈັດຕັ້ງຂອງລັດ (NGOs) ແລະ ອົງການຈັດຕັ້ງທາງສັງຄົມຕ່າງໆ ກໍ່ຈະສາມາດນຳໃຊ້ໄດ້ເຊັ່ນກັນ.

ຄູ່ມືດັ່ງກ່າວ ມີຈຸດເດັ່ນຫລາຍດ້ານຖ້າທຽບໃສ່ກັບຄູ່ມືຫລືຮູບແບບວິທີການອື່ນ; ຄູ່ມືນີ້ຊຸກຍູ້ໃຫ້ທຸກພາກສ່ວນທີ່ເຮັດວຽກປ່າສະຫງວນ ໄດ້ສື່ສານກັບກຸ່ມຄົນອື່ນໆໃນສັງຄົມທ້ອງຖິ່ນ ບໍ່ສະເພາະແຕ່ກຸ່ມຄົນຫລືກຸ່ມຜູ້ນຳຂອງບ້ານ ຊຶ່ງມັນໄດ້ເນັ້ນໃຫ້ຜູ້ນຳໃຊ້ເຫັນໄດ້ປະເດັນບັນຫາພົວພັນທີ່ຫລາກຫລາຍຂຶ້ນ ເພື່ອໃຫ້ນຳໄປພິຈາລະນາຊອກວິທີການແກ້ໄຂຕ່າງໆໄດ້ຢ່າງເຫມາະສົມ ໂດຍມັນໄດ້ສ້າງໂອກາດໃຫ້ມີການສື່ສານຊຶ່ງກັນແລະກັນໄດ້ ລະຫວ່າງຫນ່ວຍງານ ສາຍການຈັດຕັ້ງລະດັບຕ່າງໆ

ການເນັ້ນໃສ່ຂອດການສື່ສານ ແລະ ຂອດການເຂົ້າຮ່ວມຂອງຊຸມຊົນທ້ອງຖິ່ນ ຈະເປັນທາງເລືອກທີ່ດີເຮັດໃຫ້ການພັດທະນາຫັ້ນໃກ້ເຂົ້າສູ່ມາດຕະຖານສາກົນ ໃນແງ່ກ່ຽວກັບ ມາດຕະການປົກປ້ອງສິ່ງແວດລ້ອມແລະສັງຄົມ ທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າສະຫງວນ ເຊັ່ນ: ມາດຕະຖານຂອງ Aichi ຫລື ແມ່ນກະທັ້ງ ມາດຕະຖານຂອງ REDD+. ມັນເປັນການສ້າງໂອກາດໃຫ້ແກ່ການປັບຕົວ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງ ໃຫ້ສາມາດແກ້ໄຂບັນຫາສຳລັບການອະນຸຮັກ ແລະ ການພັດທະນາໄດ້ຢ່າງເຫມາະສົມ.

ຄູ່ມືປະເມີນການໃຫ້ບໍລິການລະບົບນິເວດແບບມີສ່ວນຮ່ວມ ກັບປະຊາຊົນທ້ອງຖິ່ນ

ຄູ່ມືນີ້ສ້າງຂຶ້ນເພື່ອນຳໃຊ້ເຂົ້າໃນການປະເມີນ ການໃຫ້ບໍລິການຂອງລະບົບນິເວດທຳມະຊາດ ທັງໃນທາງກົງແລະທາງອ້ອມ (ເຊັ່ນ ທີ່ດິນ, ນ້ຳ, ສະພາບແວດລ້ອມ ດິນຟ້າອາກາດ ແລະ ອື່ນໆທີ່ມີຄຸນຄ່າທາງດ້ານວັດທະນະທຳ, ຄຸນຄ່າທາງດ້ານວັດຖຸ-ຈິດໃຈ, ຕະຫລອດຮອດ ຄວາມສວຍງາມຂອງທຳມະຊາດ) ທີ່ມີຕໍ່ປະຊາຊົນທ້ອງຖິ່ນ ທີ່ດຳລົງຊີວິດອາໃສຢູ່ໃນເຂດປ່າສະຫງວນ.

ຄູ່ມືນີ້ເປັນເອກະສານສຳລັບພະນັກງານຫລືວິຊາການ ທີ່ເຮັດວຽກພາກສະຫນາມ ຢູ່ໃນຂົງເຂດຫລືຂະແໜງການ ຄຸ້ມຄອງປ່າສະຫງວນ, ກະສິກຳ-ປ່າໄມ້, ທີ່ດິນ ຫລື ຂະແໜງການອື່ນໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນພະນັກງານທີ່ຍັງຫນຸ່ມນ້ອຍທາງດ້ານປະສົບການ ໃນການເຮັດວຽກກັບຊຸມຊົນ ພະນັກງານທີ່ເຄື່ອນໄຫວວຽກງານ ປະເມີນແນວຄວາມຄິດຂອງທ້ອງຖິ່ນ ຫລື ເກັບກຳຂໍ້ມູນຕ່າງໆ ເພື່ອນຳມາໃຊ້ເຂົ້າໃນວຽກງານການຄຸ້ມຄອງຊັບພະຍາກອນ.

ຄູ່ມືນີ້ຈະຊ່ວຍໃຫ້ຜູ້ທີ່ນຳໃຊ້ ສາມາດຊອກຄົ້ນຫາຂໍ້ມູນ ແລະ ກຳນົດໄດ້ບັນຫາ ແລະ ວິທີທາງແກ້ໄຂ ຫລື ທາງອອກໃນການແກ້ໄຂບັນຫາຮ່ວມກັນກັບປະຊາຊົນທ້ອງຖິ່ນທີ່ອາໄສ ຫລື ດຳລົງຊີວິດ ແບບອາໄສທຳມະຊາດ ຢູ່ໃນພື້ນທີ່ ຊຶ່ງໂດຍປົກກະຕິເຂົາເຈົ້າຈະມີຖານະຄວາມເປັນຢູ່ແຕກຕ່າງກັນ ເຊັ່ນ: ຄວາມແຕກຕ່າງທາງດ້ານເສດຖະກິດ ຖານະທາງສັງຄົມ, ເພດ ຫລື ຊົນເຜົ່າ; ທີ່ນຳໃຊ້ທີ່ດິນແລະຊັບພະຍາກອນຢູ່ພາຍໃນ ແລະ ອ້ອມຂ້າງປ່າສະຫງວນແຫ່ງຊາດ. ການປະເມີນຮ່ວມກັບປະຊາຊົນ ຈະປະເປັນການສ້າງໃຫ້ມີຄວາມເຂົ້າໃຈທີ່ແຈ່ມແຈ້ງນຳກັນ ກ່ຽວກັບສະພາບບັນຫາຫຍຸ້ງຍາກ ແລະ ຄຸນປະໂຫຍດຂອງລະບົບນິເວດ ເຮັດໃຫ້ຮູ້ໄດ້ເຖິງ ຜົນໄດ້ຜົນເສຍ ແລະ ກຳນົດແນວທາງຫລືວິທີທາງເພື່ອສະເໜີວິທີການແກ້ໄຂຕ່າງໆແກ່ຂັ້ນເທິງ.

ຄູ່ມືນີ້ຈະໃຫ້ຄຳແນະນຳກ່ຽວກັບວິທີການສົນທະນາກັບຊຸມຊົນທ້ອງຖິ່ນ ເພື່ອໃຫ້ໄດ້ມາຊຶ່ງຂໍ້ມູນທີ່ດີ ມີຄຸນນະພາບ. ການສົນທະນາກັບປະຊາຊົນຄວນຈະຈັດແບ່ງຊາວບ້ານອອກເປັນຫລາຍກຸ່ມ ແລ້ວດຳເນີນ ການຄົ້ນຄ້ວາກັບແຕ່ລະກຸ່ມ ວ່າມີສະພາບບັນຫາພົວພັນເຖິງລະບົບນິເວດຄືແນວໃດ. ການສົນທະນາຄວນເນັ້ນໃສ່ ໃຫ້ເປັນໄປໃນຮູບແບບຂອງການເຈລະຈາ ໂດຍມີການແລກປ່ຽນຄຳຄິດເຫັນແລະຂໍ້ມູນຂ່າວສານຕ່າງໆ ໃນການນຳໃຊ້ຊັບພະຍາກອນທີ່ມີຢູ່ປະຈຸບັນ (ຕົວຢ່າງ ເຄື່ອງປ່າຂອງດົງ ສັດປ່າ ທີ່ດິນ ແລະ ອື່ນໆ) ຊຶ່ງອາດຈະລວມໄປເຖິງຜົນປະໂຫຍດອື່ນໆຂອງລະບົບນິເວດນັ້ນນຳ. ໃນຂະນະດຽວກັນ ກໍ່ຊອກຄົ້ນເຖິງທາງອອກຮ່ວມກັນ ເພື່ອແກ້ໄຂບັນຫາແລະສິ່ງທ້າທາຍຕ່າງໆ.

ການປະເມີນສະພາບບັນຫາຕ່າງໆກ່ຽວກັບການໃຫ້ບໍລິການຂອງສິ່ງແວດລ້ອມນີ້ ຄວນຈະເຮັດຄືນເປັນແຕ່ຊ່ວງໄລຍະຊຶ່ງອາດຈະເຮັດປີລະເທື່ອ ຫຼື ທຸກໆສອງປີອີງຕາມຄວາມເຫມາະສົມ ການເຈລະຈາອາດຈະເຊື່ອມໂຍງເຂົ້າກັບການເຄື່ອນໄຫວກິດຈະກຳທີ່ດຳເນີນຢູ່ ເຊ່ນວຽກງານການວາງແຜນການນຳໃຊ້ທີ່ດິນ ຫລື ການຈັດສັນຊັບພະຍາກອນ ເພື່ອໃຫ້ມີການຄຸ້ມຄອງຫລືອະນຸຮັກຮ່ວມກັນ ໃຫ້ສາມາດນຳໃຊ້ໄດ້ຍາວນານ ແລະມີຄວາມຍຸດຕິທຳ

ຄູ່ມືນີ້ສຳຄັນແນວໃດ ແລະ ເປັນຫຍັງຈຶ່ງຕ້ອງໃຊ້ຄູ່ມືນີ້?

ຄູ່ມືນີ້ຈະເຮັດໃຫ້ພະນັກງານພາກສະໜາມ ຫລື ຜູ້ນຳໃຊ້ສາມາດຮັບຮູ້ໄດ້ເຖິງສະພາບບັນຫາ ແລະ ປະກົດການຕ່າງໆທີ່ເກີດຂຶ້ນໃນທ້ອງຖິ່ນ; ສາມາດຮູ້ໄດ້ເຖິງຄວາມຕ້ອງການ ແລະ ແນວຄວາມຄິດຂອງຊຸມຊົນຕໍ່ກັບວິທີການແກ້ໄຂບັນຫາຕ່າງໆ; ຄູ່ມືນີ້ຈະເຮັດໃຫ້ພະນັກງານທີ່ເຮັດວຽກຄຸ້ມຄອງຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນປ່າສະຫງວນມີໂອກາດ ສ້າງຄວາມເຂົ້າໃຈກັບປະຊາຊົນໃນທ້ອງຖິ່ນໃຫ້ເປັນອັນ ໜຶ່ງອັນດຽວກັນ ໂດຍການມີສ່ວນຮ່ວມຂອງເຂົາເຈົ້າໃນຂະບວນການຕັດສິນໃຈ, ການຄຸ້ມຄອງປ່າໄມ້, ທີ່ດິນ ແລະ ຊັບພະຍາກອນອື່ນໆຢ່າງມີປະສິດທິຜົນ ແລະ ຫລີກລ້ຽງບັນຫາທີ່ອາດຈະເກີດຂຶ້ນໃນກອງານາຄົດ.

ເຄື່ອງມືດັ່ງກ່າວແມ່ໃສ່ສ້າງເງື່ອນໄຂໃຫ້ແກ່ເຈົ້າໜ້າທີ່ປ່າສະຫງວນໄດ້ມີການຈັດຕັ້ງປະຊຸມເປັນປົກກະຕິ ແລະ ສົນທະນາກັບປະຊາຊົນ ເຊິ່ງໂດຍທົ່ວໄປແລ້ວສະພາບບັນຫາ ແລະ ຄວາມຫຍຸ້ງຍາກຕ່າງຈະມີການປ່ຽນແປງຢູ່ຕະຫລອດເວລາ ເຮັດໃຫ້ສາມາດຮູ້ໄດ້ເຖິງສະພາບຄວາມເປັນຈິງຢູ່ທ້ອງຖິ່ນ ແລະ ສາມາດວາງມາດຕະການເພື່ອແກ້ໄຂໄດ້ທັນເວລາ. ຂໍ້ມູນດັ່ງກ່າວ ໄດ້ອີງໃສ່ຄວາມຄິດເຫັນຂອງຊຸມຊົນທ້ອງຖິ່ນ ເຮັດໃຫ້ເຂົາເຈົ້າມີຄວາມຮູ້ສຶກມີຄວາມເປັນເຈົ້າຂອງ ຫລື ມີສ່ວນໃນຂະບວນການພັດທະນາໃຫ້ມີຄວາມຍືນນານ.

ຂໍ້ມູນທີ່ໄດ້ຈາກຕົວແທນຂອງຊຸມຊົນ ແລະ ຈາກພາກສ່ວນຕ່າງໆພາຍໃນບ້ານທີ່ມີຄວາມສົນໃຈ ຈະສະແດງໃຫ້ເຫັນພາບລວມຂອງສະພາບບັນຫາທີ່ເກີດຂຶ້ນຕົວຈິງ ດັ່ງນັ້ນ, ເຄື່ອງມືນີ້ຈະຊ່ວຍເຮັດໃຫ້ພາກສ່ວນທີ່ກ່ຽວຂ້ອງໂດຍກົງ ຮູ້ໄດ້ເຖິງສະພາບການປ່ຽນແປງຕ່າງໆທີ່ໄດ້ເກີດຂຶ້ນ ເຊັ່ນ: ການປ່ຽນແປງທາງດ້ານປະລິມານການນຳໃຊ້ຜົນຜະລິດຈາກປ່າໄມ້ ສາມາດບົ່ງບອກເຖິງຄວາມອຸດົມສົມບູນຂອງຊັບພະຍາກອນ ເພີ່ມຂຶ້ນຫລືຫລຸດລົງ ແລະ ສາມາດບົ່ງບອກໃຫ້ຮູ້ລ່ວງໜ້າວ່າການເກັບກູ້ຊັບພະຍາກອນນັ້ນໆຫຼາຍເກີນໄປຫລືບໍ່ ເຊິ່ງຈະເປັນໄພຂົ່ມຂູ່ຕໍ່ການອະນຸຮັກ ເຮັດໃຫ້ມີຜົນສະທ້ອນຕໍ່ຄວາມຍືນຍົງຂອງຊັບພະຍາກອນ.

ຄູ່ມືນີ້ ຈະຊ່ວຍສົ່ງເສີມໃຫ້ມີການສົນທະນາເປັນແບບສ້າງສັນ ລະຫວ່າງພະນັກງານປ່າໄມ້ແລະປະຊາຊົນທ້ອງຖິ່ນ. ຊຸມຊົນໃນເຂດປ່າສະຫງວນຈະໄດ້ເຂົ້າຮ່ວມໂດຍກົງໃນການປຶກສາຫາລື ຍ້ອນແນວນັ້ນ ປະຊາຊົນຈະໄດ້ຮັບຮູ້ເຖິງຄວາມຈຳເປັນຊຶ່ງຈະຕ້ອງໄດ້ມີການອະນຸຮັກ ແລະ ພະນັກງານເອງກໍ່ຈະຮັບຮູ້ ເຖິງສະພາບບັນຫາຫຍຸ້ງຍາກຊຸມຊົນກຳລັງປະເຊີນໜ້າຢູ່ໃນປະຈຸບັນ. ຜ່ານຂະບວນການປຶກສາຫາລືດັ່ງກ່າວ ຈະເຮັດໃຫ້ທຸກຝ່າຍຊອກຫາທາງອອກ ແລະ ຕົກລົງຮ່ວມກັນໄດ້ ແລະ ມີຄວາມສອດຄ່ອງບໍ່ຜິດຕໍ່ລະບຽບກົດໝາຍ.

ແມ່ນໃຜ?

ແມ່ນໃຜຈະເປັນຜູ້ນຳໃຊ້ຂໍ້ມູນທີ່ໄດ້ຈາກການສົນທະນາ? ຂໍ້ມູນຈະຖືກນຳໃຊ້ໂດຍພະນັກງານວິຊາການ ແລະ ຜູ້ບໍລິຫານຈາກອົງການຈັດຕັ້ງຂອງລັດທີ່ມີສິດອຳນາດກ່ຽວຂ້ອງກັບການຄຸ້ມຄອງປ່າສະຫງວນ ລວມທັງອົງການຈັດຕັ້ງແລະສະມາຄົມຕ່າງໆທີ່ກ່ຽວຂ້ອງ. ຄູ່ມືດັ່ງກ່າວສາມາດນຳໃຊ້ໄດ້ ໂດຍອົງການ ທີ່ບໍ່ສັງກັດລັດທັງພາຍໃນແລະຕ່າງປະເທດ ທີ່ໃຫ້ການຊ່ວຍເຫຼືອທາງດ້ານວິຊາການແກ່ໜ່ວຍງານປ່າສະຫງວນ ພາຍໃຕ້ຮູບແບບການຄຸ້ມຄອງຮ່ວມກັນ.

ອຸປະກອນ

ເຄື່ອງມືທີ່ຈຳເປັນພື້ນຖານມີ: ເຈ້ຍແຜນໃຫຍ່, ປົກຂຽນກະດານຂາວ, ກ້ອງຖ່າຍຮູບ

ຄວາມເໝາະສົມ

ຄູ່ມືນີ້ມີຄຸນປະໂຫຍດສຳລັບພື້ນທີ່ປ່າໄມ້ ແລະ ດິນທາມ ເຊິ່ງສາມາດນຳໃຊ້ເພື່ອປະເມີນສະພາບ ແລະ ຕິດຕາມ ການໃຫ້ບໍລິການຂອງລະບົບນິເວດ.

ບຸກຄະລາກອນ

ໃຜຈະເປັນຜູ້ປະເມີນ? ການລົງໄປບ້ານ ແລະ ການຈັດກຸ່ມສົນທະນາແມ່ນກິດຈະກຳທີ່ມີຄວາມລະອຽດອ່ອນທີ່ສຸດ ໃນບັນດາກິດຈະກຳການຄຸ້ມຄອງບໍລິຫານ. ກິດຈະກຳດັ່ງກ່າວຄວນແມ່ນພະນັກງານປ່າສະຫງວນ ຫຼື ພະນັກງານ ທີ່ເຮັດວຽກການຄຸ້ມຄອງປ່າສະຫງວນ ຜູ້ທີ່ໄດ້ຮັບການຝຶກອົບຮົມໃນການເປັນຜູ້ອຳນວຍຄວາມສະດວກ ແລະ ຄວບ ຄຸມການເຮັດກິດຈະກຳທີ່ມີສ່ວນຮ່ວມຂອງຊຸມຊົນ ເປັນຜູ້ທີ່ຮັບຄວາມເຊື່ອໝັ້ນ ແລະມີສາຍພົວພັນທີ່ດີໃນການເຮັດ ວຽກງານກັບປະຊາຊົນ ໃນບ້ານອ້ອມຂ້າງປ່າສະຫງວນເປັນຜູ້ດຳເນີນ ແຕ່ບໍ່ຄວນແມ່ນຜູ້ເຮັດວຽກກ່ຽວກັບການ ບັງຄັບໃຊ້ກົດໝາຍ (ທັງນີ້ ກໍ່ເພື່ອສົ່ງເສີມ ແລະ ຍົກສູງການປຶກສາຫາລືແບບເປີດອົກເປີດໃຈກັບສະມາຊິກຂອງ ຊຸມຊົນ). ໃນຂະບວນການສົນທະນາ ຢ່າງໜ້ອຍຕ້ອງມີສອງຄົນ, ຜູ້ໜຶ່ງເປັນຜູ້ອຳນວຍຄວາມສະດວກ ແລະ ຄວບຄຸມການປຶກສາຫາລື ແລະ ອີກຜູ້ໜຶ່ງແມ່ນບັນທຶກການສະຫຼຸບຂອງຜູ້ອຳ ນວຍຄວາມສະດວກ ພ້ອມທັງຄວບ ຄຸມ ການສົນທະນາ ແລະ ຖ່າຍພາບໃນເວລາທີ່ເຫັນວ່າມີຄວາມເໝາະສົມ.

ກຳນົດເວລາໃນການສົນທະນາ

ຕາມປົກກະຕິແລ້ວການປະຊຸມສົນທະນາແບບນີ້ຈະດຳເນີນໄປເປັນເວລາບໍ່ຄວນເກີນ 3 ຊົ່ວໂມງ ຫລື ບໍ່ຕ່ຳກວ່າ 2 ຊົ່ວໂມງເຄິ່ງ. ສຳລັບເວລາທີ່ເໝາະສົມທີ່ສຸດໃນການສົນທະນານີ້ຄວນຈະດຳເນີນ ໃນຕ້ອນເຊົ້າ ແຕ່ການຈັດສັນ ເວລາທີ່ເໝາະສົມນັ້ນຈະຕ້ອງແມ່ນສະມາຊິກຊຸມຊົນເປັນຜູ້ຕັດສິນໃຈ ເພື່ອຮັບປະກັນບໍ່ໃຫ້ການປຶກສາຫາລືນັ້ນ ມີຜົນກະທົບຕໍ່ວຽກງານກິດຈະວັດປະຈຳວັນຂອງເຂົາເຈົ້າ.

ສະຖານທີ່ປະຊຸມ

ຖ້າເປັນໄປໄດ້ການຈັດກຸ່ມສົນທະນານັ້ນຄວນຈັດຢູ່ໃນບັນດາບ້ານທີ່ຢູ່ອ້ອມຂ້າງປ່າສະຫງວນທີ່ໄດ້ຮັບຜົນກະທົບ ທັງທາງກົງແລະທາງອ້ອມ ແລະ ທັງໄດ້ຮັບຜົນປະໂຫຍດແລະເສຍຜົນປະໂຫຍດຈາກ ປ່າສະຫງວນເຊິ່ງອາດ ແມ່ນບັນດາຊຸມຊົນຕາມເງື່ອນໄຂດັ່ງນີ້:

- ຊຸມຊົນທີ່ອາໃສຢູ່ໃກ້ຄຽງກັບພື້ນທີ່ໆມີຄຸນຄ່າດ້ານການອະນຸຮັກສູງ;
- ຊຸມຊົນທີ່ອາໃສຜະລິດຕະພັນຈາກປ່າຫຼືພື້ນທີ່ດິນທາມ ສຳລັບການລ້ຽງຊີບຂອງເຂົາເຈົ້າ ຍິ່ງເຂົາ ເຈົ້າອາ ໃສສິ່ງເລົ່ານັ້ນຫຼາຍເທົ່າໃດກໍ່ຍິ່ງຈະມີໂອກາດສູງ ທີ່ຈະໄດ້ຮັບຂໍ້ມູນທີ່ເປັນປະໂຫຍດກ່ຽວກັບການ ຊັບພະຍາກອນເຫລົ່ານັ້ນ ແລະ ເຂົາເຈົ້າຈະມີຄວາມສົນໃຈສູງ ຕໍ່ການຊອກຫາວິທີການເພື່ອຮັກສາ ຫຼື ເພື່ອໃຫ້ໄດ້ສິດທິໃນການນຳໃຊ້;
- ຊຸມຊົນທີ່ຄາດວ່າເກັບຜະລິດຕະພັນຫຼາຍເກີນໄປໃນພື້ນທີ່ ເຊ່ນ ສັດ-ພືດ ຫລືສິ່ງທີ່ມີຄຸນຄ່າອະນຸຮັກສູງ; ແລະ
- ຊຸມຊົນທີ່ອາໃສຢູ່ໃນພື້ນທີ່ໆມີການ ເຂົ້າ-ອອກຂອງຊັບພະຍາກອນ.

ບາດກ້າວໃນສ້າງກຸ່ມສົນທະນາ

1. ຕ້ອງທຳຄວາມຄຸ້ນເຄີຍກັບບ້ານທີ່ຈະມີການດຳເນີນການປະເມີນ ພົບປະກັບນາຍບ້ານ ແລະ ຜູ້ນຳຊຸມຊົນ ຕ່າງໆທີ່ກ່ຽວຂ້ອງ ເປັນຕົ້ນ ຫົວໜ້າແມ່ນຍິງ ແລະ ຫົວໜ້າສະມາຄົມການປູກການລ້ຽງ ເພື່ອອະທິບາຍ ຈຸດປະສົງ ແລະ ກິດຈະກຳທີ່ຈະເຮັດການປຶກສາຫາລືກັບຊາວບ້ານ ຜູ້ທີ່ມີການນຳໃຊ້ ຊັບພະຍາກອນ
2. ໂດຍໄດ້ຮັບການຊ່ວຍເຫຼືອຈາກນາຍບ້ານ ແລະ ຫົວໜ້າສະມາຄົມຕ່າງໆຂອງບ້ານ ກຳນົດເອົາ ສະມາຊິກຂອງຊຸມຊົນຈາກຄົວເຮືອນ 8-10 ຄົນ ຕໍ່ໜຶ່ງກຸ່ມສົນທະນາຫນຶ່ງ (ເຊັ່ນ: ຈັດກຸ່ມໜຶ່ງທີ່ມີ ສະມາຊິກ ເຂົ້າເຖິງການນຳໃຊ້ທີ່ດິນ, ກຸ່ມໜຶ່ງທີ່ສະມາຊິກບໍ່ສາມາດເຂົ້າເຖິງການນຳໃຊ້ທີ່ດິນ ແລະ ອີກກຸ່ມໜຶ່ງ ແມ່ນຜູ້ຍິງ).
3. ຕາມມາດຖານໃນບ້ານໜຶ່ງຕ້ອງມີສາມກຸ່ມສົນທະນາທີ່ແຕກຕ່າງກັນ, ເບິ່ງໃນບາດກ້າວທີ່ (2). ສະມາຊິກ ຂອງກຸ່ມສົນທະນາຄວນແມ່ນຜູ້ທີ່ສາມາດເປັນຕົວແທນຂອງຜູ້ຊົມໃຊ້ ຊຶ່ງເຂົາເຈົ້າຈະຕ້ອງເປັນຜູ້ທີ່ໃຫ້ ຄວາມສົນໃຈແລະໃຫ້ການປຶກສາໄດ້
4. ຮັບປະກັນໃຫ້ພະນັກງານຂອງປ່າໄມ້ ແລະ ພະນັກງານທີ່ເຮັດຊ່ວຍເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດການ ປະຊຸມປຶກສາຫາລື ກັບກຸ່ມສົນທະນາຕ່າງໆໃນແຕ່ລະບ້ານເປົ້າໝາຍ. ແຕ່ກໍ່ຕ້ອງ ຄຳນຶງວ່າຜູ້ອຳນວຍຄວາມ ສະດວກໃຫ້ແກ່ການສົນທະນາຕ້ອງເປັນກາງທີ່ສຸດ ແລະ ຕ້ອງຮັບປະກັນໃຫ້ ທຸກຄົນໄດ້ປະກອບສ່ວນ ເພື່ອ ໃຫ້ການປຶກສາຫາລືດຳເນີນໄປຢ່າງເປີດອົກເປີດໃຈ ແລະ ເປັນການ ປຶກສາຫາລືໃນນາມເປັນຕົວແທນຂອງ ກຸ່ມ. ສິ່ງຄວນຄຳນຶງ ຕ້ອງລະວັງບໍ່ສ້າງໃຫ້ມີຄວາມແຕກ ແຍກຄວາມສາມັກຄີພາຍໃນຊຸມຊົນ (ຕົວຢ່າງ: ຜູ້ ເກັບກູ້ເຄື່ອງປ່າຂອງດົງ ແລະ ກຸ່ມຜູ້ທີ່ຕ້ອງການ ໃຫ້ຮັກສາລະບົບນິເວດໄວ້) ເບິ່ງເນື້ອໃນລຸ່ມນີ້ ກ່ຽວກັບແຕ່ລະ ບາດກ້າວ.
5. ຕ້ອງແຈ້ງລ່ວງໜ້າກ່ຽວກັບການຈັດກຸ່ມສົນທະນາ ເພື່ອໃຫ້ຜູ້ທີ່ຈະເຂົ້າຮ່ວມທັງໝົດໄດ້ເຂົ້າຮ່ວມ; ຕ້ອງຮັບປະ ກັນວ່າເວລາທີ່ກຳນົດສຳລັບກອງປະຊຸມນັ້ນເໝາະສົມສຳລັບຜູ້ເຂົ້າຮ່ວມ. ຕົວຢ່າງ: ກອງປະຊຸມອາດຈະຈັດ ແຕ່ເຊົ້າກ່ອນການດຳເນີນກິດຈະກຳອື່ນ ຫຼື ອາດຈະຈັດຕອນຄ່ຳເມື່ອກິດ ຈະກຳອື່ນ ຫຼື ວຽກເຮືອນສຳເລັດ ແລ້ວ.
6. ປະສານສົມທົບກັບນາຍບ້ານ ຫຼື ຫົວໜ້າສະມາຄົມທີ່ມີໃນບ້ານນັ້ນຈັດວາງລາຍການ ແລະ ສະຖານທີ່ສຳ ລັບການປຶກສາຫາລື.

ບາດກ້າວໃນການຈັດກຸ່ມສົນທະນາ

ການຈັດປະຊຸມສົນທະນາກັບປະຊາຊົນອາດເຮັດເປັນແບບບໍ່ຕໍ່ເນື່ອງ ຫລື ຕໍ່ເນື່ອງ ທຸກຫົກເດືອນ ຫຼື ທຸກປີ.

1. ກຳນົດຜູ້ທີ່ຈະເຂົ້າຮ່ວມກຸ່ມສົນທະນາໃຫ້ແທດເໝາະອີງຕາມການຊົມໃຊ້ຊັບພະຍາກອນ ຂອງ ແຕ່ລະບ້ານ
2. ຕ້ອງຮັບປະກັນໃຫ້ຈຸດປະສົງຂອງການປະຊຸມມີຄວາມຈະແຈ້ງກ່ຽວກັບການໃຫ້ຄຸນປະໂຫຍດ ຂອງລະບົບນິເວດ (ຕົວຢ່າງ: ເພື່ອປຶກສາຫາລືສິ່ງທ້າທາຍ ແລະ ກາລະໂອກາດກ່ຽວກັບ: (ກ). ການໃຫ້ຄຸນປະໂຫຍດແບບທາງກົງເຊັ່ນ: ທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ການນຳ ໃຊ້ນ້ຳ, (ຂ). ການໃຫ້ຄຸນປະໂຫຍດແບບທາງອ້ອມເປັນຕົ້ນການຮັກສາລະບົບນ້ຳ ແລະ ການປ້ອງກັນດິນເຊາະເຈື່ອນ ແລະ ໄພນ້ຳຖ້ວມ, ແລະ (ຄ). ຄຸນປະໂຫຍດທາງດ້ານວັດ ທະນະທຳ ແລະ ຜົນປະໂຫຍດທີ່ພົວພັນເຖິງຄຸນຄ່າທາງດ້ານວັດຖຸ ແລະ ຄຸນຄ່າທາງດ້ານຈິດໃຈ

ເຊັ່ນ: ທາງດ້ານວັດຖຸເປັນການສະໜອງທາງດ້ານເຄື່ອງປ່າຂອງດົງ, ການນຳໃຊ້ໄມ້ ແລະ ອື່ນໆ ສ່ວນທາງດ້ານຈິດໃຈເຊັ່ນ ສິ່ງສັກສິດທີ່ນັບຖື, ສະຖານທີ່ສັກກະລະບູຊາ ແລະ ອື່ນໆ).

3. ການປະຊຸມເລີ່ມຕົ້ນດ້ວຍການກຳນົດເວລາທີ່ຈະຕ້ອງໃຊ້ໃນການປະຊຸມ (ປົກກະຕິປະມານສາມຊົ່ວໂມງ). ໃນໄລຍະເວລາທີ່ລໍຖ້າຜູ້ເຂົ້າຮ່ວມນັ້ນປຶກສາຫາລາລືແບບບໍ່ເປັນທາງການພົບປະເຊິ່ງກັນ ແລະກັນ ແຕ່ຕ້ອງຫຼີກເວັ້ນການສົນທະນາ ທີ່ເຂົ້າຂ້າງຝ່າຍໃດຝ່າຍໜຶ່ງຫລືການສົນທະນາທີ່ອາດເຮັດໃຫ້ອີກຝ່າຍໃດຝ່າຍໜຶ່ງບໍ່ພໍໃຈ ແລະ ສະແດງຄວາມສົນໃຈກ່ຽວກັບທັດສະນະ ແລະ ຄວາມຮູ້ຂອງຊຸມຊົນ.
4. ການແນະນຳສະມາຊິກຂອງກຸ່ມສົນທະນາວ່າການສົນທະນານັ້ນຈະກວມເອົາບັນຫາທີ່ທາງກຸ່ມຄິດວ່າສຳຄັນທີ່ສຸດກ່ຽວກັບການໃຫ້ຄຸນປະໂຫຍດ ແລະ ຜົນກະທົບຂອງລະບົບນິເວດ ລວມທັງການໃຫ້ຄຸນປະໂຫຍດແບບທາງກົງ (ຜະລິດຕະຜົນທີ່ໄດ້ຈາກລະບົບນິເວດ "ທຳມະຊາດ" ເປັນຕົ້ນ ການເຂົ້າເຖິງ ແລະ ນຳໃຊ້ທີ່ດິນ, ນ້ຳ, ແລະ ຊັບພະຍາກອນອື່ນໆ) ແລະ ການໃຫ້ຄຸນປະໂຫຍດແບບທາງອ້ອມ (ຜົນປະໂຫຍດທີ່ໄດ້ຈາກຂະບວນການຂອງລະບົບນິເວດ ເຊັ່ນ ຄວາມສົມດຸນຂອງສະພາບອາກາດ ແລະ ນ້ຳ) ແລະ ຜົນປະໂຫຍດທາງດ້ານວັດທະນະທຳ (ຜົນປະໂຫຍດທີ່ພົວພັນເຖິງຄວາມຮູ້ ແລະ ຄຸນຄ່າທາງດ້ານວັດທະນະທຳ ລວມທັງຜົນປະໂຫຍດທາງດ້ານວັດຖຸ ແລະ ຈິດໃຈ ຄວາມສວຍງາມຂອງທຳມະຊາດ).
5. ຫຼັງຈາກນັ້ນໃຫ້ກຸ່ມສົນທະນານກຳນົດປະເດັນທີ່ສຳຄັນ **<u>ສະພາບບັນຫາ ຫຼື ຄວາມຫຍຸ້ງຍາກ</u>** ກ່ຽວກັບການນຳໃຊ້ຊັບພະຍາກອນ, **<u>ສິ່ງທ້າທາຍ</u>** ແລະ **<u>ການລະໂອກາດ</u> ຫລື ທ່າແຮງຕ່າງໆ** ເພື່ອແກ້ໄຂ. ບັນທຶກໃຫ້ເປັນແບບປະຈັກຕາເປັນລາຍການຕາມທີ່ກອງປະຊຸມໄດ້ຍົກຂຶ້ນ ອາດມີການແຕ້ມເປັນຮູບພາບໃສ່ເຈ້ຍ ຫລື ກະດານໃຫຍ່ທີ່ໄດ້ກະກຽມ (ຖ້າມີ)
6. ສົນທະນາຄືນແຕ່ລະລາຍການໄປເທື່ອລະຢ່າງ:
   (ກ). ແມ່ນຫຍັງເປັນທີ່ທ້າທາຍທີ່ສຸດ ແລະ ອັນໃດທີ່ເຫັນວ່າເປັນການລະໂອກາດ ໃຫ້ກຳນົດເອົາສາມຢ່າງ ຕໍ່ (1) ການນຳໃຊ້ທີ່ດິນ, (2) ການນຳໃຊ້ຊັບພະຍາກອນທຳມະຊາດ ແລະ (3) ຄຸນໂຫຍດອື່ນໆຂອງລະບົບນິເວດເປັນຕົ້ນ ແມ່ນ ນ້ຳ, ການປ້ອງກັນດິນ ແລະ ການເຊາະເຈື່ອນຂອງດິນ. ຕ້ອງຮັບປະກັນໃຫ້ໄດ້ປຶກສາຫາລືການຄຸ້ມຄອງບໍລິຫານທີ່ພົວພັນເຖິງແຕ່ລະບັນຫາຂ້າງເທິງ.
   (ຂ). ບັນຫາທ້າທາຍແຕ່ລະຢ່າງຢູ່ໃນລະດັບໃດ, ຫຍຸ້ງຍາກຂະໜາດໃດ ແລະ ຢູ່ສະຖານທີ່ໃດ? ແລະ ກະລະໂອກາດທີ່ຈະແກ້ໄຂບັນຫານີ້ມີຄືແນວໃດ?
   (ຄ). ມີຜົນກະທົບຕໍ່ແຕ່ລະກຸ່ມຄົນໃນຊຸມຊົນແຕກຕ່າງກັນແນວໃດ?
   (ງ). ປັດໃຈອັນໃດເປັນສິ່ງທີ່ສາມາດຫຼຸດຜ່ອນສິ່ງທ້າທາຍນັ້ນໄດ້ ແມ່ນຫຍັງທີ່ເປັນຄວາມຈຳເປັນຈະຕ້ອງໄດ້ອະນຸຮັກ ແລະ ຮັກສາປ່າສະຫງວນ?
   (ຈ). ສະແດງຄວາມເຫັນຕໍ່ກັບສິ່ງທີ່ອາດຈະດຳເນີນໄປໄດ້ໂດຍຊາວບ້ານ, ໂດຍພະນັກງານຄຸ້ມຄອງປ່າສະຫງວນ ແລະ ໂດຍເຈົ້າໜ້າທີ່ຂອງລັດທີ່ກ່ຽວຂ້ອງໃນຂັ້ນທ້ອງຖິ່ນ.
7. ສະຫລຸບຜົນການສົນທະນາ ພາຍຫລັງການສົນທະນາແລ້ວ ແລະ ຂໍຄວາມເຫັນເພື່ອເປັນເອກະພາບ ແລະ ຂໍ້ສະເໜີແນະ ແລະ ສະຫລຸບການສົນທະນາໃຫ້ກັບຜູ້ເຂົ້າຮ່ວມຢ່າງກົງໄປກົງມາ ແລະ ເປັນມິດ ຫລີກລ່ຽງການສ້າງຄວາມແຕກແຍກໃຫ້ກັບຊຸມຊົນ

8. ແຈ້ງໃຫ້ຜູ້ເຂົ້າຮ່ວມຮູ້ວ່າຂັ້ນຕອນຕໍ່ໄປ ຈະມີການປະສານງານພົວພັນ ແລະ ການຕັດສິນໃຈ ຂອງໜ່ວຍງານປ່າສະຫງວນໃນການຄຸ້ມຄອງປ່າສະຫງວນຈະເປັນໃນທິດທາງໃດ ແລະ ແຈ້ງໃຫ້ກັບປະຊາຊົນພາຍຫລັງກ່າວສະແດງຄວາມຂອບໃຈ (ຖ້າເປັນໄປໄດ້ຄວນກຳນົດໄລຍະເວລາໃນການລາຍງານ) ແລະ ຄວາມເປັນໄປໄດ້ຂອງໂອກາດໃນການກັບມາສົນທະນາຕື່ມອີກໃນອານາຄົດເພື່ອເຮັດໃຫ້ວຽກງານອະນຸຮັກ ແລະ ມີການນຳໃຊ້ຊັບພະຍາກອນໃນປ່າສະຫງວນແບບຍືນນານ.

7. ສັງລວມຂໍ້ມູນແລະສິ່ງທີ່ພົບເຫັນໃນເບື້ອງຕົ້ນຈາກການສົນທະນາ ແລ້ວສະຫລຸບຫຍໍ້ໃນບັ້ນທ້າຍ ຂອງການຈັດກຸ່ມສົນທະນາແຕ່ລະຄັ້ງ ແລະ ຂໍຄວາມເປັນເອກະພາບ ແລະ ຄວາມຄິດເຫັນຈາກ ສະມາຊິກກຸ່ມສົນທະນາ. ປະເມີນການດຳເນີນການສົນທະນາ ແລະ ຜ່ານບົດສະຫຼຸບສັງລວມ ກັບຜູ້ເຂົ້າຮ່ວມກຸ່ມສົນທະນາ. ແຈ້ງໃຫ້ຜູ້ເຂົ້າຮ່ວມສົນທະນາຊາບຂັ້ນຕອນຕໍ່ໄປ ການຕິດຕໍ່ປະສານງານ, ການຕັດສິນ ແລະ ຈະໃຫ້ຄຳຄິດເຫັນແນວໃດ, ຊ່ວງເວລາເມື່ອໃດ ເພື່ອໃຫ້ຊາວບ້ານໄດ້ມີຄວາມເຂົ້າໃຈຕໍ່ກັບຂະບວນການໃນການເຮັດວຽກສົນທະນາ ດັ່ງກ່າວ. ປິດກອງປະຊຸມ ໂດຍການກ່າວສະແດງຄວາມຂອບໃຈຕໍ່ການປຶກສາຫາລືຢ່າງຕໍ່ເນື່ອງໃນການຍົກລະດັບ ການອະນຸຮັກ ແລະ ນຳໃຊ້ແບບຍືນຍົງ.

ຂໍ້ແນະນຳ

1. ຕ້ອງຮັບປະກັນໃຫ້ການປຶກສາຫາລືເປັນການສົນທະນາລະຫວ່າງຜູ້ເຂົ້າຮ່ວມກຸ່ມສົນທະນາເປັນໄປ ຢ່າງເປັນກັນເອງ, ສ້າງສັນ ແລະ ສາມາດປະຕິບັດໄດ້. ຜູ້ນຳພາການປຶກສາຫາລືຕ້ອງຊຸກຍູ້ໃຫ້ທຸກຄົນທີ່ເຂົ້າຮ່ວມໄດ້ສະແດງຄວາມຄິດເຫັນ ແລະ ປະກອບສ່ວນເຂົ້າໃນການປຶກສາຫາລືຢ່າງກົງໄປກົງມາ. ຜູ້ນຳພາ (ຜູ້ອຳນວຍຄວາມສະດວກ) ການປຶກສາຫາລືຕ້ອງຈຳກັດການປະກອບຂອງຕົນເອງ ບໍ່ຄວນມີການຊີ້ນຳ ບໍ່ມີຄຳຄິດເຫັນ ຫຼື ໃຫ້ຂໍ້ມູນກ່ຽວກັບບັນຫາທີ່ຈະປຶກສາຫາລືເຊິ່ງອາດເປັນການ ຊີ້ນຳ ແຕ່ຕ້ອງສຸມໃສ່ຊຸກຍູ້ການປຶກສາຫາລືແລະການປະກອບສ່ວນຂອງຜູ້ເຂົ້າຮ່ວມທັງໝົດ. ຮັບປະກັນໃຫ້ຜູ້ນຳໃຊ້ທີ່ດິນ ແລະ ຊັບພະຍາກອນ ໄດ້ຮັບບຸລິມະສິດໃນການເປັນສະມາຊິກຂອງກຸ່ມ ສົນທະນາ. ພະຍາຍາມສ້າງ ແລະ ຮັກສາບັນ ຍາກາດຄວາມເຊື່ອໝັ້ນ. ເນັ້ນໃສ່ການຮ່ວມມືໃນທາງ ສ້າງສັນກັບປະຊາຊົນ (ຫ້າມບໍ່ໃຫ້ວາງຂໍ້ກຳນົດຕ່າງໆທີ່ອາດເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມອຶດອັດ) ແລະ ຮັບຟັງປະຊາຊົນ (ບໍ່ແມ່ນສອນປະຊາຊົນ).
2. ບາງຄັ້ງປະຊາຊົນກໍ່ອາດຈະເວົ້າລວມໆກ່ຽວກັບບັນຫາທີ່ພົວພັນກັບການນຳໃຊ້ຊັບພະຍາກອນ. ສະນັ້ນຜູ້ອຳນວຍຄວາມສະດວກຕ້ອງກຳປະເດັນໃຫ້ໄດ້ ເນັ້ນການເຈາະຈີ້ມປະເດັດບັນຫາ 'ຢູ່ບ່ອນໃດ, ແມ່ນອັນໃດ ແລະ ແມ່ນໃຜ' ເພື່ອຮັບປະກັນໃຫ້ມີການສົນທະນາກ່ຽວກັບບັນຫານັ້ນ ຢ່າງລະອຽດພຽງພໍເພື່ອໃຫ້ໄດ້ຂໍ້ມູນທີ່ເປັນປະໂຫຍດສຳລັບການຄຸ້ມຄອງປ່າສະຫງວນ ແລະ ລະບົບນິເວດທີ່ດີທີ່ສຸດ.
3. ບໍ່ໃຫ້ໃຊ້ຄຳຖາມປິດ (ເຊັ່ນ: ນ້ຳໃນແມ່ນ້ຳສາມາດດື່ມໄດ້ບໍ່ ຫລື ດິນເສື່ອມຄຸນນະພາບບໍ່? ເຊິ່ງອາດຈະໄດ້ຄຳຕອບທີ່ບໍ່ຄ່ອຍມີປະສິດທິພາບ ແລະ ຂໍ້ມູນແບບຄາດເດົາ) ຄວນໃຊ້ຄຳຖາມເປີດ (ເຊັ່ນ: ນ້ຳໃນແມ່ນ້ຳເປັນແນວໃດ? ສະພາບດິນເປັນແນວໃດ ເປັນຕົ້ນ). ແນະນຳໃຫ້ກຸ່ມສົນທະນານັ້ນເປັນຜູ້ສະຫຼຸບເອງກ່ຽວກັບການສົນທະນານັ້ນໆ.
4. ຖ້າຫາກມີແຜນການນຳໃຊ້ຊັບພະຍາກອນ ຫຼື ແຜນພັດທະນາ/ຈັດສັນຂັ້ນບ້ານ ກໍ່ໃຫ້ສຶກສາແລະເອົາເຂົ້າປຶກສາຫາລືໃນກຸ່ມສົນທະນາໃນຂົງເຂດທີ່ເໝາະສົມໂດຍເຊື່ອມສານກັນລະຫວ່າງແຜນການ ແລະ ການສົນທະນາ. ພະຍາຍາມໃຫ້ການສົນທະນານັ້ນເຈາະຈົງເຖິງສະຖານທີ່.

5. ນຳສະເໜີຜົນທີ່ໄດ້ຈາກກຸ່ມສົນທະນານັ້ນຕໍ່ຫົວໜ້າການຈັດຕັ້ງບ້ານ/ທ້ອງຖິ່ນ ແລະ ແຈ້ງໃຫ້ເຂົາເຈົ້າຮູ້ກ່ຽວກັບ ແຜນການຂອງບາດກ້າວຕໍ່ໄປ.

ການຈັດລຽງຂໍ້ມູນ, ການວິເຄາະ ແລະ ການຕີຄວາມໝາຍ

ການຈັດລຽງຂໍ້ມູນ

1. ພາຍຫຼັງທີ່ສຳເລັດການຈັດກຸ່ມສົນທະນາແລ້ວໃຫ້ເບິ່ງຂໍ້ມູນຄືນ ແລະ ຈັດເປັນກຸ່ມຕາມບັນຫາທີ່ພົວພັນເຖິງ ສິ່ງທ້າທາຍ ແລະ ການລະໂອກາດ ເຊັ່ນ: ການນຳໃຊ້ທີ່ດິນ, ບັນຫາຊັບພະຍາກອນທຳມະຊາດ, ແລະ ສິ່ງທ້າທາຍ ແລະການລະໂອກາດໃນການອະນຸຮັກຊີວະນາໆພັນທີ່ສຳຄັນຕ່າງໆ.
2. ຂຽນເປັນບົດລາຍງານຫຍໍ້ພາຍໃນໜຶ່ງອາທິດຫຼັງຈາກສຳເລັດການຈັດກຸ່ມສົນທະນາ, ບົດລາຍງານດັ່ງກ່າວ ຕ້ອງປະກອບມີ:
   (ກ). ສິ່ງທ້າທາຍຫລັກໆ ແລະ ການລະໂອກາດ ທີ່ໄດ້ປຶກສາຫາລື ແລະ ຈັດເປັນຫົວຂໍ້ໃຫຍ່;
   (ຂ). ການອະທິບາຍການສົນທະນາກ່ຽວກັບບັນຫາ ແລະ ການແກ້ໄຂບັນຫາທີ່ພົວພັນເຖິງການ ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທີ່ສຳຄັນ.

ການວິເຄາະ ແລະ ການຕີຄວາມໝາຍ

3. ສ່ວນໜຶ່ງຂອງການລາຍງານຕ້ອງປະກອບມີການວິເຄາະ ແລະ ການຕີຄວາມໝາຍ. ສິ່ງທີ່ພົບເຫັນ ຈາກການ ວິເຄາະນັ້ນສອດຄ່ອງກັບສິ່ງທີ່ຄາດການ ໄວ້ ຫຼື ບໍ່? ສົມທຽບຜົນທີ່ໄດ້ຈາກການຈັດກຸ່ມສົນທະນາໃນແຕ່ລະບ້ານ ເພື່ອຊອກໃຫ້ເຫັນສິ່ງທີ່ຄ້າຍຄືກັນ ແລະ ບັນຫາສະເພາະທີ່ພົວພັນເຖິງຄຸນ ລັກສະນະຂອງກຸ່ມ (ເພດ, ສະພາບ ການດຳລົງຊີວິດ ແລະ ອື່ນໆ). ບັນດາກຸ່ມສົນທະນາຕ່າງໆນັ້ນ ຍົກບັນຫາທີ່ຄ້າຍຄືກັນ ຫຼື ບໍ່? ຫຼື ແຕ່ລະກຸ່ມມີບັນ ຫາສະເພາະຂອງໃຜລາວບໍ? ການສົມທຽບຂໍ້ມູນທີ່ ໄດ້ຈາກກຸ່ມສົນທະນາລະຫວ່າງບ້ານຕໍ່ບ້ານນັ້ນເປັນແນວ ໃດ? ພື້ນທີ່ການຈັດກຸ່ມສົນທະນານັ້ນມີຜົນ ແນວໃດຕໍ່ຂໍ້ມູນ?
4. ສິ່ງທີ່ພົບເຫັນນັ້ນສະແດງໃຫ້ເຫັນສະພາບການໃດໜຶ່ງເທົ່ານັ້ນບໍ່? ຫຼື ເປັນບັນຫາຕໍ່ເນື່ອງກ່ຽວກັບການນຳ ໃຊ້ທີ່ດິນ ແລະ ຊັບພະຍາກອນທີ່ຕ້ອງໄດ້ປຶກສາຫາລືກັບຜູ້ບໍລິຫານປ່າສະຫງວນ/ ເຈົ້າໜ້າທີ່ທ້ອງຖິ່ນຂອງລັດ ແລະ ຈະຕ້ອງໄດ້ແຈ້ງຄືນໃຫ້ກັບປະຊາຊົນກ່ຽວກັບການແກ້ໄຂ ບັນຫານັ້ນ ໃນກອງປະຊຸມຕໍ່ມາ.
5. ມີບັນຫາໃດຮີບດ່ວນທີ່ເຂົາເຈົ້າຕ້ອງການໃຫ້ຜູ້ບໍລິຫານປ່າສະຫງວນແກ້ໄຂໂດຍໄວບໍ່ (ຕົວຢ່າງ: ການນຳໃຊ້ ທີ່ດິນ ແລະ ຊັບພະຍາກອນ ລວມທັງການການຕັດໄມ້ ແລະ ການບຸກເບີກເນື້ອທີ່ ຫຼື ການລ່າສັດ ຫຼື ການເກັບ ຊື້ສັດປ່າເປັນສິນຄ້າສົ່ງອອກຈາກຄົນພາຍນອກ) ?

ການນຳສະເໜີຜົນຂອງການວິເຄາະ

ມີຄວາມຈຳເປັນທີ່ຈະຕ້ອງໄດ້ລາຍງານໃຫ້ຜູ້ບໍລິຫານປ່າສະຫງວນຊາບ ຜົນທີ່ໄດ້ຈາກການຈັດກຸ່ມສົນ ທະນາ ເພື່ອໃຫ້ເພີ່ນໄດ້ດຳເນີນການຮ່ວມກັບເຈົ້າໜ້າທີ່ຂັ້ນເມືອງຢ່າງຖືກຕ້ອງຕໍ່ກັບບັນຫາທີ່ຊາວ ບ້ານ ໄດ້ຍົກຂຶ້ນ.

ພ້ອມດຽວກັນນັ້ນ ກໍ່ມີຄວາມຈຳເປັນຕ້ອງໄດ້ສົ່ງຂໍ້ຄິດເຫັນຄືນໃຫ້ແກ່ຊາວບ້ານທີ່ເຂົ້າຮ່ວມກຸ່ມສົນທະນາ ແລະ ນາຍ ບ້ານ ກ່ຽວກັບບັນຫາທີ່ໄດ້ປຶກສາຫາລືກັບຜູ້ບໍລິຫານປ່າສະຫງວນ ແລະ ແຜນການແກ້ໄຂ ບັນຫາຂອງເຂົາເຈົ້າ ເພື່ອແກ້ໄຂບັນຫາການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທີ່ຊາວບ້ານຍົກ ຂຶ້ນ. ຜູ້ສະເໜີຕ້ອງ ແມ່ນຜູ້ທີ່ໄດ້ຮັບ ການແຕ່ງຕັ້ງຈາກຫົວໜ້າປ່າສະຫງວນ ບ່ອນທີ່ບ້ານຕັ້ງຢູ່. ຜູ້ສະ ຕ້ອງແມ່ນ ພະນັກງານປ່າສະຫງວນທີ່ໄດ້ຮັບການ

ຝຶກອົບຮົມດ້ານເຕັກນິກໃນການຈັດກຸ່ມສົນທະນາ ແລະ ໄດ້ຮັບການມອບໝາຍໃຫ້ເປັນໃຈກາງໃນການປະສານ ງານລະຫວ່າງບ້ານ ແລະ ເຈົ້າໜ້າທີ່ປ່າສະຫງວນ

ຕາຕະລາງເວລາການນຳສະເໜີ

ການນຳສະເໜີຕໍ່ຜູ້ບໍລິຫານປ່າສະຫງວນຄວນປະຕິບັດຕາມຕາຕະລາງເວລາການປະຊຸມປົກກະຕິ ແລະ ເປັນກິດ ຈະກຳທີ່ສາມາດເປີດ/ປິດໄດ້ ຫຼື ອາດຈະຈັດເປັນວົງກສືບຕໍ່ກໍ່ໄດ້ ຕົວຢ່າງ: ທຸກໆຫົກ ເດືອນ ຫຼື ໜຶ່ງປີ ໃນບ່ອນ ທີ່ສາມາດເປັນໄປໄດ້. ຮັບປະກັນໃຫ້ມີເວລາພຽງພໍສຳລັບການວິໄຈຜົນທີ່ໄດ້ຮັບ ຈາກການ ຈັດກຸ່ມສົນທະນາ ໂດຍເນັ້ນໃສ່ບັນຫາໃຫຍ່ທີ່ໄດ້ຍົກຂຶ້ນເຊິ່ງພົວພັນກັບການນຳໃຊ້ທີ່ດິນ ແລະ ຊັບພະຍາກອນ. ຕ້ອງເລີ່ມຕົ້ນກະກຽມ ລ່ວງໜ້າຢ່າງໜ້ອຍໜຶ່ງອາທິດກ່ອນກອງປະຊຸມ.

ດຳເນີນການນຳສະເໜີ

1. ຕ້ອງນຳສະເໜີຕາມວິທີ ທີ່ຮັບປະກັນໃຫ້ຜູ້ບໍລິຫານມີຄວາມສົນໃຈ. ການນຳສະເໜີທີ່ດີທີ່ສຸດ ຈະນຳໄປສູ່ ການຖາມ ແລະ ການສົນທະນາ, ແລະ ການຕັດສິນໃຈທີ່ຖືກຕ້ອງສອດຄ່ອງ. ສະນັ້ນ, ຈະໄດ້ສະເໜີວິທີ ແລະ ຂໍ້ແນະນຳເພື່ອແກ້ໄຂບັນຫາທີ່ຍົກຂຶ້ນ ແລະ ສະເໜີແນະນຳ ໂດຍຊາວ ບ້ານ ທີ່ໄດ້ມີບົດສະເໜີນັ້ນ.
2. ໃນບົດສະເໜີນັ້ນ ຕ້ອງເຮັດເປັນຂໍ້ໂດຍໃຊ້ເຄື່ອງໝາຍຫົວແຖວຕ່າງໆ ສຳລັບບັນຫາທີ່ສຳຄັນ ແລະຂໍ້ສະ ເໜີແນະນຳໃນການແກ້ໄຂບັນຫາ ແລະ ແຜນທີ່ ແລະຮູບພາບເພື່ອສະ ແດງໃຫ້ເຫັນພາບຂອງບັນຫາ. ຮັບປະກັນໃຫ້ທຸກຄົນສາມາດເຫັນ, ອ່ານ ແລະ ໄດ້ຍິນສິ່ງທີ່ກຳລັງ ນຳສະເໜີ.
3. ຖ້າຫາກວ່າການສະເໜີນັ້ນໃຊ້ເວລາຫຼາຍກວ່າ 30 ນາທີ ຄວນພັກ 5 ນາທີ. ຖ້າບໍ່ດັ່ງນັ້ນ ຜູ້ບໍລິຫານ ອາດຈະເສຍສະມາທິໃນການຟັງ ແລະອາດຈະລືມສິ່ງທີ່ທ່ານໄດ້ນຳສະເໜີໄປ.
4. ດຳເນີນການນຳສະເໜີຊ້າໆ. ເວົ້າຄືນຜົນການສົນທະນາທີ່ສຳຄັນທີ່ສຸດ ເພື່ອຮັບປະກັນໃຫ້ຜູ້ ບໍລິຫານເຂົ້າ ໃຈປະເດັນ ແລະ ຂໍ້ສະເໜີແນະນຳທີ່ປະຊາຊົນຍົກຂຶ້ນ.

ມີຫຍັງໃໝ່ໃນຄູ່ມືສຳລັບການສົນທະນາສະບັບນີ້

ຄູ່ມືນີ້ມີອັນດີຫຼາຍຢ່າງຖ້າສົມທຽບກັບວິທີການເກົ່າທີ່ເຄີຍປະຕິບັດຜ່ານມາ ເຄື່ອງມືດັ່ງກ່າວ:

- ສົ່ງເສີມໃຫ້ຜູ້ບໍລິຫານ ແລະ ພະນັກງານປ່າສະຫງວນ ບໍ່ສະເພາະແຕ່ຕິດຕໍ່ພົວພັນກັບນາຍບ້ານ ເທົ່ານັ້ນ ແຕ່ຍັງຕິດຕໍ່ສື່ສານກັບຜູ້ທີ່ນຳໃຊ້ທີ່ດິນ ແລະ ຊັບພະຍາກອນໂດຍກົງຫຼາຍພາກສ່ວນຢູ່ ໃນແຕ່ລະບ້ານ;
- ສົ່ງເສີມວິທີການເປີດກວ້າງກວ່າວິທີການແບບເກົ່າຫຼາຍປະເພດທີ່ພົວພັນເຖິງຄຸນປະໂຫຍດ ແລະ ຜົນກະທົບຂອງລະບົບນິເວດ;
- ຍົກສູງໂອກາດໃນການສົນທະນາລະຫວ່າງພະນັກງານປ່າສະຫງວນ, ບັນດາຜູ້ບໍລິຫານ ແລະ ຊາວ ບ້ານທີ່ກໍ່ໃຫ້ເກີດຜົນກະທົບຕໍ່ ຫຼື ໄດ້ຮັບຜົນກະທົບຈາກປ່າສະຫງວນ.
- ອຳນວຍໃຫ້ແກ່ວິທີການແບບນີ້ມນອນຕໍ່ການຈຳກັດຜູ້ນຳໃຊ້ ຕາມລະບຽບກົດໝາຍພາຍໃນ ທີ່ພົວ ພັນເຖິງປ່າສະຫງວນ; ສົ່ງເສີມໃຫ້ສັງຄົມຊ່ວຍປະກອບສ່ວນ ໂດຍສະເພາະແມ່ນ ການມີສ່ວນ ຮ່ວມຫຼາຍຂຶ້ນຂອງບ້ານໃນການຄຸ້ມຄອງ.